GCI

# ບົດທີ 10
# ການອະພິບານສິດ

## ອະລຳພະບົດ

ຈຸດປະສົງຂອງບົດຮຽນ
- ເພື່ອໃຫ້ເຂົ້າໃຈເຖິງຕົ້ນແບບຂອງສິດຍາພິບານຕາມຄຳສອນຂອງພະຄຳພີ
- ເພື່ອໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການຊົງເອີ້ນຂອງພະເຈົ້າ”
- ເພື່ອໃຫ້ເຂົ້າໃຈເຖິງຫລັກການຂອງພະຄຳພີກ່ຽວກັບການຕຽມຕົວເປັນສິດຍາພິບານ
- ເພື່ອໃຫ້ເຂົ້າໃຈເຖິງຄວາມສຳພັນທີ່ສິດຍາພິບານມີຕໍ່ຄົນທີ່ຢູ່ອ້ອມຮອບຕໍ່ຄຣິສຕະຈັກ ແລະຕໍ່ຜູ້ຄົນໃນຊຸມຊົນ
- ເພື່ອໃຫ້ຮູ້ເຖິງວິທີການປະກອບພິທີຕ່າງໆ ເຊັ່ນ ງານແຕ່ງງານ ງານສົບ

## ໂຄງຮ່າງບົດຮຽນ

I. ຮາກຖານເບື້ອງຕົ້ນຂອງພັນທະກິດການອະພິບານສິດ
   ກ. ການຕຽມຕົວຂອງສິດຍາພິບານ
   ຂ. ຈຸດປະສົງຂອງສິດຍາພິບານ
   ຄ. ຕົ້ນແບບໃນພະຄຳພີ - ສິດຍາພິບານໃນຖານະຜູ້ລ້ຽງແກະ
   ງ. ຄຸນລັກສະນະຂອງສິດຍາພິບານທີ່ດີ
   ຈ. ແນວຄິດຫລັກຈາກຈົດໝາຍຝາກຂອງໂປໂລ
   ສ. ການຊົງເອີ້ນຂອງພະເຈົ້າ
   ຊ. ການສ້າງມາດຕະຖານທາງດ້ານສິນລະທຳໃນງານພັນທະກິດ

II. ຄວາມສຳພັນພື້ນຖານຂອງສິດຍາພິບານ
   ກ. ຄວາມສຳພັນລະຫວ່າງສິດຍາພິບານກັບພະເຈົ້າ
   ຂ. ຄວາມສຳພັນລະຫວ່າງສິດຍາພິບານກັບພັນລະຍາ ແລະລູກ
   ຄ. ຄວາມສຳພັນລະຫວ່າງສິດຍາພິບານກັບຜູ້ນຳຄຣິສຕະຈັກທ້ອງຖິ່ນ
   ງ. ຄວາມສຳພັນລະຫວ່າງສິດຍາພິບານກັບຊຸມຊົນ

III. ຄວາມຮັບຜິດຊອບຂອງສິດຍາພິບານ
   ກ. ສິດຍາພິບານກັບການເທດສະໜາ
   ຂ. ສິດຍາພິບານກັບການນະມັດສະການ
   ຄ. ສິດຍາພິບານກັບການຢ້ຽມຢາມ

GCI

ງ.  ສິດຍາພິບານກັບການໃຫ້ຄໍາປຶກສາ

ຈ.  ສິດຍາພິບານກັບການຕຽມງານແຕ່ງງານ

ສ.  ສິດຍາພິບານກັບງານສົບ

ຊ.  ສິດຍາພິບານກັບພິທີມອບຖວາຍ

ຍ.  ສິດຍາພິບານກັບການບໍລິຫານ

ດ.  ສິດຍາພິບານກັບການເບິ່ງແຍງຜູ້ນໍາຄຣິສຕະຈັກ

GCI

# I. ຮາກຖານເບື້ອງຕົ້ນຂອງພັນທະກິດການອະພິບານສິດ

ກ. ການຕຽມຕົວຂອງສິດຍາພິບານ

ບັນດາອາຊີບທັງຫລາຍໃນໂລກ ຕ່າງກໍມີການທຸ້ມເທທັງເງິນທອງ ແລະເວລາໃນການຝຶກອົບຮົມຄົນງານ ຍິ່ງກວ່ານັ້ນອີກເທົ່າໃດທີ່ເຮົາຈະຕ້ອງຮູ້ຈັກຕຽມຕົວໃນການທີ່ຈະເຂົ້າສູ່ພັນທະກິດການເປັນສິດຍາພິບານ

1. **ໂມເຊ**

   ພະເຈົ້າຊົງຕຽມໂມເຊໃຫ້ພ້ອມສຳລັບງານຝ່າຍວິນຍານ ແລະບໍລິຫານ ໃນການເປັນຜູ້ນຳ ປະຊາກອນອິດສະລາເອນ

   ພະອົງຊົງແນະນຳໃຫ້ໂມເຊໄດ້ຮັບການຮຽນຮູ້ໃນວິທະຍາການຕ່າງໆຂອງເອຢິບ ພະເຈົ້າຍັງຊົງຍອມໃຫ້ໂມເຊປະເຊີນກັບຊ່ວງເວລາແຫ່ງການລໍຄອຍຝ່າຍວິນຍານກ່ອນທີ່ຈະເລີ່ມຕົ້ນ
   ເຮັດພັນທະກິດ

   "ຝ່າຍໂມເຊ ຈຶ່ງໄດ້ຮັບການສອນໃນວິຊາການທຸກຢ່າງຂອງຊາວເອຢິບ ມີສັກກະຍະພາບໃນການເວົ້າ ແລະກິດຈະການຕ່າງໆ" **ກິດຈະການ** 7:22

2. **ໂປໂລ**

   ພະເຈົ້າຊົງຕຽມໂປໂລໄວ້ເພື່ອໃຫ້ເປັນອັກຄະສາວົກສຳລັບຄຣິສຕະຈັກຍຸດທຳອິດ

   - ໂປໂລເປັນສະມາຊິກສະພາແຊນເຮີດຣີນ
   - ເປັນຜູ້ທີ່ມີການສຶກສາສູງຫລາຍ ເປັນສິດຂອງອາຈານ ກາມາລີເອນ
   - ຫລັງຈາກກັບໃຈໃຫມ່ແລ້ວ ໂປໂລໄດ້ໃຊ້ເວລາຢູ່ທີ່ອາລາເບັຽ
   - ໂປໂລໃຊ້ເວລາຢູ່ດາມັດສະກັດ 3 ປີ

   ນີ້ຄືໄລຍະເວລາແຫ່ງການລໍຄອຍ ແລະຕຽມຊີວິດ

3. **ເອລີຢາ**

   ເອລີຊາຕຽມຕົວໂດຍການເປັນຄົນຮັບໃຊ້ຂອງຜູ້ເຜີຍພະວັດຈະນະ ເອລີຢາ **2ພົງກະສັດ** 3:11
   "ເອລີຊາລູກຊາຟັດຢູ່ບ່ອນນີ້ພະເຈົ້າຂ້າ ເປັນຜູ້ທີ່ເທນ້ຳໃສ່ມືເອລີຢາ"

GCI

ຄຳຖາມ: ສິດຍາພິບານຈະຕ້ອງມີການຕຽມຕົວຢ່າງໃດແດ່?

ການສຶກສາໃນລະດັບມັດທະຍົມຂຶ້ນໄປຈະເປັນປະໂຫຍດ ບາງຄົນຊຶ່ງຢູ່ໃນປະເທດຍາກຈົນອາດຈະບໍ່ມີໂອກາດໄດ້ຮຽນຢ່າງເປັນທາງການໃນລະດັບຊັ້ນປະຖົມ ຫລືມັດທະຍົມ ຢາກຈະໜູນໃຈທ່ານວ່າການຂາດການສຶກສາບໍ່ໄດ້ເຮັດໃຫ້ທ່ານຂາດຄຸນສົມບັດໃນການຮັບໃຊ້ພະເຈົ້າ ແຕ່ຖ້າທ່ານມີໂອກາດໄດ້ສຶກສານັ້ນຈະເປັນປະໂຫຍດ ການໄດ້ຮຽນໃນໂຮງຮຽນພະຄຣິສຕະທຳກໍຈະມີສ່ວນຊ່ວຍຫລາຍໃນພັນທະກິດ

ຂ. ຈຸດປະສົງຂອງສິດຍາພິບານ
**ເອເຟໂຊ 4:7-13**

"ແຕ່ວ່າພະຄຸນນັ້ນຊົງໂປດປະທານແກ່ເຮົາທຸກໆຄົນຕາມຂະໜາດທີ່ພະຄຣິດປະທານໃຫ້ ເຫດສະນັ້ນຈຶ່ງມີພະວັດຈະນະວ່າຄັ້ນພະອົງສະເດັດຂຶ້ນໄປສູ່ທີ່ສູງພະອົງກໍຊົງນຳພວກຊະເລີຍໄປ ແລະປະທານຂອງປະທານແກ່ມະນຸດ

(ທີ່ກ່າວວ່າພະອົງສະເດັດຂຶ້ນໄປນັ້ນ ຈະໝາຍຄວາມຢ່າງອື່ນໄປບໍ່ໄດ້ນອກຈາກວ່າພະອົງໄດ້ສະເດັດລົງໄປສູ່ເບື້ອງຕ່ຳຂອງແຜ່ນດິນໂລກນັ້ນ ອົງຜູ້ສະເດັດລົງໄປນັ້ນກໍຄືພະອົງຜູ້ທີ່ສະເດັດຂຶ້ນໄປສູ່ທີ່ສູງເໜືອຟ້າສະຫວັນທັງປວງນັ້ນເອງ ເພື່ອຈະໄດ້ສະຖິດຢູ່ທົ່ວໃນສິ່ງສາລະພັດ) ຂອງປະທານຂອງພະອົງ ກໍຄືໃຫ້ບາງຄົນເປັນອັກຄະສາວົກ ບາງຄົນເປັນຜູ້ປະກາດພະທຳ ບາງຄົນເປັນຜູ້ປະກາດຂ່າວປະເສີດ ບາງຄົນເປັນສິດຍາພິບານ ແລະອາຈານ ເພື່ອຕຽມໄພ່ພົນໃຫ້ເປັນຄົນທີ່ຈະຮັບໃຊ້ ເພື່ອເສີມສ້າງພະກາຍຂອງພະຄຣິດໃຫ້ຈຳເລີນຂຶ້ນ ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນ້ຳນຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງພະບຸດຂອງພະເຈົ້າ ຈົນກວ່າເຮົາຈະເປັນຜູ້ໃຫຍ່ເຕັມທີ່ ຄືເຕັມເຖິງຂະໜາດຄວາມໄພບູນຂອງພະຄຣິດ"

ພັນທະກິດການເປັນສິດຍາພິບານ ຄືຂອງປະທານຈາກພະເຈົ້າ **ເອເຟໂຊ 4:7-13**

1. ເພື່ອຕຽມຄົນຂອງພະເຈົ້າ **ຂໍ້ 12**

ສິດຍາພິບານຕ້ອງຕຽມຄົນຂອງພະເຈົ້າໃຫ້ເຮັດງານຮັບໃຊ້ ດັ່ງທີ່ກ່າວໄວ້ໃນເອເຟໂຊ 4:12 ໜ້າທີ່ຂອງສິດຍາພິບານຈຶ່ງຕ້ອງກ່ຽວຂ້ອງກັບການຝຶກອົບຮົມຜູ້ເຊື່ອໃຫ້ພ້ອມທີ່ຈະເຮັດຕາມພະປະສົງຂອງພະເຈົ້າສຳລັບເຂົາ ພະເຈົ້າບໍ່ເຄີຍມີພະປະສົງໃຫ້ສິດຍາພິບານເປັນຜູ້ເຮັດໜ້າທີ່ທຸກຢ່າງໃນໂບດເອງ ໃນຄຣິສຕະຈັກທີ່ເຕີບໃຫຍ່ໄວຫລາຍແຫ່ງ ສິດຍາພິບານຈະຝຶກຜູ້ນຳຫລັກໃຫ້ຊ່ວຍໃນການສອນ ການເທດສະໜາ ແລະເຮັດໜ້າທີ່ບັບຕິດສະມາໃນນ້ຳແກ່ຜູ້ເຊື່ອໃໝ່

GCI

2. ເພື່ອເສີມສ້າງພະກາຍຂອງພະຄຣິດ **ຂໍ້** 12

ສິດຍາພິບານຄືຜູ້ຮັບໃຊ້ພະເຈົ້າເພື່ອເສີມສ້າງຄຣິສຕະຈັກຂອງພະອົງຂຶ້ນ ສິດຍາພິບານຈະຕ້ອງບໍ່ທຳລາຍຄຣິສຕະຈັກແຕ່ເປັນຜູ້ເຮັດໃຫ້ຄຣິສຕະຈັກຈະເລີນຂຶ້ນ

3. ເພື່ອພັດທະນາໃຫ້ເກີດເອກະພາບໃນຄວາມເຊື່ອ **ຂໍ້** 13

ສິດຍາພິບານຄວນເຮັດຢ່າງເຕັມທີ່ເພື່ອຮັກສາໄວ້ຊຶ່ງຄວາມເປັນນ້ຳນຶ່ງໃຈດຽວກັນ ແລະສັນຕິສຸກໃນຄຣິສຕະຈັກ ບາງຄັ້ງເນື່ອງຈາກຂາດສະຕິປັນຍາ ສິດຍາພິບານອາດກາຍເປັນຕົ້ນເຫດທີ່ກໍ່ໃຫ້ເກີດການແຕກແຍກຂຶ້ນໃນຄຣິສຕະຈັກ ເພງສັນລະເສີນ 100:33 ບອກເຮົາວ່າ ບ່ອນໃດທີ່ມີຄວາມເປັນນ້ຳນຶ່ງໃຈດຽວກັນພະພອນຂອງພະເຈົ້າຈະດຳລົງຢູ່ທີ່ນັ້ນ

4. ເພື່ອພັດທະນາໃຫ້ຜູ້ເຊື່ອຈະເລີນສູ່ຄວາມຮູ້ເຖິງພະເຢຊູຄຣິດ **ຂໍ້** 13

ສິດຍາພິບານຄວນເປັນຄົນທີ່ສອນພະວັດຈະນະຂອງພະເຈົ້າໄດ້ ເພື່ອສະມາຊິກຈະໄດ້ຈຳເລີນຂຶ້ນໃນຄວາມຮູ້ເຖິງພະວັດຈະນະ

5. ເພື່ອຊ່ວຍໃຫ້ຜູ້ເຊື່ອຈະເລີນເຕີບໃຫຍ່ **ຂໍ້** 13

ສິດຍາພິບານຄວນເຮັດທຸກຢ່າງເທົ່າທີ່ຈະເຮັດໄດ້ ເພື່ອຊ່ວຍໃຫ້ລູກແກະເຕີບໃຫຍ່ໃນຄວາມເຊື່ອ ມີບາງຄັ້ງທີ່ຜູ້ເຊື່ອຕ້ອງຝ່າຟັນສະຖານະການທີ່ຍາກລຳບາກ ໃນເວລາຢ່າງນັ້ນແຫລະທີ່ເຂົາຕ້ອງການບຳລຸງລ້ຽງຈາກສິດຍາພິບານ

ຄ. ຕົ້ນແບບໃນພະຄຳພີ - ສິດຍາພິບານໃນຖານະຜູ້ລ້ຽງແກະ

**ເພງສັນລະເສີນ 23 ແລະ ໂຢຮັນ 10**

ກະລຸນາຈື່ໄວ້ວ່າ ສິດຍາພິບານຄືຜູ້ລ້ຽງແກະ ບໍ່ແມ່ນຜູ້ຮັບຈ້າງ ຊຶ່ງສົນໃຈແຕ່ຜົນປະໂຫຍດສ່ວນຕົວຂອງຕົນເອງ

1. ພະເຢຊູຊົງເປັນຜູ້ລ້ຽງທີ່ດີ **ໂຢຮັນ 10:14**

ໃນຖານະທີ່ເປັນສິດຍາພິບານ  ເຂົາສາມາດດຳເນີນຕາມພະເຢຊູຜູ້ລ້ຽງທີ່ດີ ຜູ້ລ້ຽງແກະຈະຍອມເຮັດທຸກຢ່າງເທົ່າທີ່ຈະເຮັດໄດ້ເພື່ອເຮັດໜ້າທີ່ດັ່ງກ່າວໃນເບື້ອງຕົ້ນໃຫ້ສຳເລັດ ສ່ວນຄົນຮັບຈ້າງຈະຄອຍ

GCI

ຫາຊ່ອງທາງເກັບກ່ຽວປະໂຫຍດ ທັງຄວາມປາດຖະໜາ ຄວາມໂລບ ແລະລາຄະຕັນຫາຂອງຕົວເອງ ໜ້າເສັຽໃຈຖ້າເຮົາບໍ່ລະມັດລະວັງ ໃນຄຣິສຕະຈັກອາດມີສິດຍາພິບານທີ່ບໍ່ດີຈຶ່ງຈະກໍ່ຄວາມເສັຽຫາຍໃຫຍ່ຫລວງແກ່ຝູງແກະ ຫລືຜູ້ເຊື່ອ ຊຶ່ງເຮັດໃຫ້ພະນາມຂອງພະເຢຊູຄຣິດເຈົ້າຂອງເຮົາເສື່ອມເສັຽກຽດ

2. ສິດຍາພິບານນໍາໜ້າລູກແກະ **ໂຢຮັນ 10:3 , ເພງສັນລະເສີນ 23:2**
ຜູ້ລ້ຽງແກະຍ່ອມນໍາໜ້າຝູງແກະ ໃນຖານະສິດຍາພິບານ ທ່ານຕ້ອງຮຽນຮູ້ທີ່ຈະສ້າງນິມິດແກ່ຄຣິສຕະຈັກ ໂດຍທາງນິມິດນັ້ນ ທ່ານກໍນໍາພາເຂົາໄປຕາມທາງທີ່ພະເຈົ້າຈັດຕຽມໄວ້ສໍາລັບພວກເຂົາ

ສິດຍາພິບານຄວນນໍາລູກແກະ ບໍ່ແມ່ນຕີ ຫລືຂັບໄລ່ດ້ວຍໄມ້ເທົ້າ

ສິດຍາພິບານບາງຄົນ ບັງຄັບໃຫ້ສະມາຊິກເຮັດຕາມວິຖີທາງຂອງເຂົາ ພວກເຂົາເປັນຜູ້ນໍາປະ ເພດຂາດຄວາມໝັ້ນຄົງ ແລະມັກບີບບັງຄັບ ໃຊ້ຄົນເປັນເຄື່ອງມື

3. ສິດຍາພິບານລ້ຽງດູລູກແກະ **ເພງສັນລະເສີນ 23:2**
ໃນຖານະຜູ້ລ້ຽງ ເຂົາຈະເຮັດທຸກຢ່າງທີ່ເຮັດໄດ້ເພື່ອໃຫ້ລູກແກະໄດ້ຮັບການລ້ຽງດູຢ່າງເໝາະສົມດ້ວຍພະວັດຈະນະຂອງພະເຈົ້າ ເຂົາຕ້ອງແນ່ໃຈວ່າລູກແກະບໍ່ໄດ້ກິນສິ່ງມີພິດ ຫລືເປັນອັນຕະລາຍເຂົ້າໄປ ສິດຍາພິບານຕ້ອງສາມາດປົກປ້ອງຝູງແກະຈາກພວກຄູສອນປອມ

4. ສິດຍາພິບານຟື້ນຟູວິນຍານລູກແກະ **ເພງສັນລະເສີນ 23:3**

ໃນຊ່ວງເວລາທີ່ລູກແກະຮູ້ສຶກເຈັບປວດ ແລະທໍ້ໃຈ ພວກເຂົາຈະຖືກທົດລອງໃຈໃຫ້ປະຖິ້ມຄວາມເຊື່ອ ຫລືຫລົງຫາຍໄປ ນີ້ເປັນຊ່ວງເວລາທີ່ສິດຍາພິບານຈໍາເປັນຕ້ອງຟື້ນຟູຜູ້ເຊື່ອໃຫ້ກັບມີຄວາມສໍາພັນກັບພະເຢຊູຄຣິດເຈົ້າ ອົງພະຜູ້ລ້ຽງ

5. ສິດຍາພິບານນໍາພາລູກແກະ **ເພງສັນລະເສີນ 23:3**

ມີບາງຄັ້ງທີ່ຜູ້ເຊື່ອບໍ່ແນ່ໃຈວ່າຄວນເຮັດຢ່າງໃດກັບບັນຫາໃນຊີວິດ ຊຶ່ງເປັນສິ່ງທີ່ສິດຍາພິບານຕ້ອງເຂົ້າມາຊ່ວຍລູກແກະໃຫ້ຮູ້ເຖິງນໍ້າພະໄທຂອງພະເຈົ້າ ໂດຍທາງການອະທິຖານ ແລະພະວັດຈະນະ

6. ສິດຍາພິບານເລົ້າໂລມໃຈ ແລະໄປກັບລູກແກະໃນຍາມຍາກລໍາບາກ **ເພງສັນລະເສີນ 23:4**

GCI

ເມື່ອສະມາຊິກຕ້ອງປະເຊີນກັບຊ່ວງເວລາແຫ່ງຄວາມເຈັບຊໍ້າ ແລະຖືກທົດລອງໃຈ ນັ້ນຄືໂອກາດທີ່ສິດຍາພິບານຈະໄດ້ເລົ້າໂລມໃຈລູກແກະຂອງເຂົາ

7. ສິດຍາພິບານປົກປ້ອງ ແລະຍອມສະຫລະຊີວິດເພື່ອລູກແກະ **ໂຢຮັນ** 10:11

ມີສະຖານະການບາງຢ່າງຊຶ່ງອາດຈະນຳອັນຕະລາຍມາສູ່ລູກແກະ ເຊັ່ນໃນບາງປະເທດທີ່ມີການຂົ່ມເຫງຜູ້ເຊື່ອ ສິດຍາພິບານຈຳເປັນຕ້ອງປົກປ້ອງລູກແກະຂອງຕົນ ບາງຄັ້ງສິດຍາພິບານຈະບໍ່ຍອມເປີດເຜີຍລາຍຊື່ບັນດາຜູ້ເຊື່ອໃຫ້ແກ່ເຈົ້າໜ້າທີ່ ເພື່ອບໍ່ໃຫ້ສະມາຊິກຖືກຂົ່ມເຫງໂດຍບໍ່ຈຳເປັນ ຫລາຍຄັ້ງສິດຍາພິບານຈະຕ້ອງປົກປ້ອງລູກແກະຈາກເລ້ຫລ່ຽມ ແລະກົນອຸບາຍອັນຫລອກລວງຂອງຊາວໂລກ

8. ສິດຍາພິບານມີໃຈຫວ່ງໃຍຜູ້ຫລົງຫາຍ **ໂຢຮັນ** 10:16

ເຊັ່ນດຽວກັນກັບຜູ້ລ້ຽງແກະທີ່ດີຊຶ່ງຍອມປະແກະ 99 ໂຕໄວ້ເພື່ອອອກຕາມຫາໂຕທີ່ຫລົງຫາຍໃຫ້ພົບ

ງ. ຄຸນລັກສະນະຂອງສິດຍາພິບານທີ່ດີ

ຕໍ່ໄປນີ້ເປັນຄຸນລັກສະນະອັນດີຂອງສິດຍາພິບານ

1. **<u>ມີຄວາມກ້າ</u>**

ອົງພະເຢຊູບໍ່ເຄີຍຢ້ານເຮໂລດ ຫລືປີລາດ ພະອົງຊົງສຳແດງໃຫ້ເຫັນເຖິງຄວາມກ້າຫານຢ່າງຍິ່ງ ອັກຄະສາວົກໂປໂລກໍເປັນຄົນທີ່ກ້າຫານ ທ່ານຢືນຢູ່ຕໍ່ໜ້າກະສັດ ແລະເຈົ້າໜ້າທີ່ເຊັ່ນ, ຟີລິບ, ເຟທັດ ແລະອາກິບປາ (**ກິດຈະການ** 19:30)

2. **<u>ມີຄວາມຂະຫຍັນ</u>**

ໃນພະຄຳພີເຮົາເຫັນວ່າພະເຈົ້າຊົງອວຍພອນຄົນທີ່ຂະຫຍັນຂັນແຂງ ບໍ່ແມ່ນຄົນຂີ້ຄ້ານ
**ສຸພາສິດ** 22:29 "ເຈົ້າເຫັນຄົນທີ່ມີຝີມື ຂະຫຍັນ ໃນງານຂອງເຂົາບໍ່ ເຂົາຈະໄດ້ເຂົ້າເຝົ້າພະລາຊາ ເຂົາຈະຢືນຢູ່ຕໍ່ໜ້າຄົນທີ່ມີຊື່ສຽງ"

**ຢົດ** 6:10-11 ບອກໃຫ້ເຮົາຮູ້ວ່າຄົນກຽດຄ້ານນັ້ນຈະລົງເອີຍດ້ວຍຄວາມຍາກຈົນ

3. **<u>ມີສະຕິຮອບຄອບ</u>**

GCI

ໝາຍເຖິງຄຸນລັກສະນະທີ່ມີປັນຍາແລະຮູ້ຈັກວິນິໄສຢ່າງມີຫລັກ ໂປໂລກ່າວໄວ້ໃນພະທຳ **ໂລມ 14:16** ວ່າ "ສະນັ້ນຢ່າໃຫ້ສິ່ງທີ່ດີສຳລັບທ່ານ ເປັນຂໍ້ຕຳນິຕິຕຽນຂອງຜູ້ອື່ນໄດ້ເລີຍ"

4. <u>ຕົງຕໍ່ເວລາ</u>

ສິດຍາພິບານທີ່ມາປະຊຸມ ຫລືການມານະມັດສະການຊ້າຕະຫລອດ ບໍ່ແມ່ນຕົວຢ່າງທີ່ດີສຳລັບສະມາຊິກ ບາງຄັ້ງເຮົາອາດຊ້າເພາະສະຖານະການທີ່ຫລີກລ້ຽງບໍ່ໄດ້ ກໍຄວນກ່າວຄຳຂໍໂທດ

5. <u>ມີຊີວິດໃນທາງທຳ</u>

ສິດຍາພິບານຈະຕ້ອງສຳແດງເຖິງຊີວິດໃນທາງທຳສະເໝີ ເຂົາຕ້ອງສຳແດງໃຫ້ເຫັນວ່າຊີວິດຂອງເຂົາຈະເລືອກເອົາພະວັດຈະນະຂອງພະເຈົ້າ ການອະທິຖານ ແລະການດຳເນີນຊີວິດບໍລິສຸດຢູ່ສະເໝີ

**ເອຊາຢາ 52:11** ກ່າວວ່າຜູ້ຮັບໃຊ້ຂອງພະເຈົ້າຕ້ອງເປັນຢ່າງໃດ "ເຂົາທັງຫລາຍຜູ້ຖືເຄື່ອງພາຊະນະຂອງພະເຈົ້າ ໄປສາຈິ່ງໄປ ອອກໄປຈາກບ່ອນນັ້ນ ຢ່າແຕະຕ້ອງສິ່ງບໍ່ສະອາດ ຈົ່ງອອກໄປຈາກກາງເມືອງ ຈົ່ງສຳລະຕົວຂອງເຈົ້າໃຫ້ບໍລິສຸດ"

6. <u>ຄວາມຖ່ອມໃຈ</u>

**1 ເປໂຕ 5:3-6** "ແລະບໍ່ແມ່ນເໝືອນເປັນເຈົ້ານາຍທີ່ຂົ່ມຂູ່ຜູ້ຢູ່ໃຕ້ອຳນາດ ແຕ່ເປັນແບບຢ່າງແກ່ຝູງແກະນັ້ນ ແລະເມື່ອພະຜູ້ລ້ຽງຜູ້ຍິ່ງໃຫຍ່ຈະສະເດັດມາປາກົດ ທ່ານທັງຫລາຍ ຈະຮັບສັກສີ ເປັນມຸງກຸດທີ່ບໍ່ຫ່ຽວແຫ້ງ ໃນນຳນອງດຽວກັນທ່ານທີ່ອ່ອນອາວຸໂສ ກໍຈົ່ງເຊື່ອຟັງຄຳຂອງພວກຜູ້ໃຫຍ່ ອັນແທ້ຈິງໃຫ້ທ່ານທຸກຄົນມີຄວາມຖ່ອມໃຈໃນການປະຕິບັດຕໍ່ກັນແລະກັນ ດ້ວຍວ່າພະເຈົ້າຊົງເປັນ ຜູ້ປໍລະປັກກັບຄົນເຫລົ່ານັ້ນທີ່ຖືກຕົວຈອງຫອງ ແຕ່ພະອົງຊົງສຳແດງ ພະຄຸນແກ່ຄົນທີ່ອ່ອນ ນ້ອມຖ່ອມຕົນ ເຫດສະນັ້ນ ທ່ານທັງຫລາຍຈົ່ງຖ່ອມໃຈພາຍໃຕ້ພະຫັດອັນຊົງລິດຂອງພະເຈົ້າ ເພື່ອວ່າພະອົງຈະໄດ້ຊົງຍົກທ່ານຂຶ້ນເມື່ອເຖິງເວລາອັນຄວນ"

7. **ເປັນຄົນມີນ້ຳໃຈໃຫ້ອະໄພ**

ບາງຄັ້ງໃນງານພັນທະກິດ ອາດຈະມີການເຂົ້າໃຈຜິດກັນຊຶ່ງເຮັດໃຫ້ສິດຍາພິບານເສັຽໃຈ ເຂົາຕ້ອງເປັນຄົນທີ່ຮູ້ຈັກໃຫ້ອະໄພ ດັ່ງທີ່ໂປໂລສອນເຮົາໄວ້ໃນ **ເອເຟໂຊ 4:32** ວ່າ "ແລະທ່ານຈົ່ງເມດຕາຕໍ່ກັນ ມີໃຈເອັນດູຕໍ່ກັນ ແລະອະໄພໂທດໃຫ້ກັນ ເໝືອນດັ່ງທີ່ພະເຈົ້າໄດ້ຊົງໂປດອະໄພໂທດ ໃຫ້ແກ່ທ່ານໃນພະຄຣິດນັ້ນ"

GCI

**ຈ.	ແນວຄິດຫລັກຈາກຈົດໝາຍຝາກຂອງໂປໂລ**

**2ຕີໂມທຽວ**

1. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນອາຈານ ຂໍ້ 2**	ຕ້ອງສັ່ງສອນຜູ້ເຊື່ອ
2. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນທະຫານ ຂໍ້ 3**	ຕ້ອງອົດທົນຕໍ່ຄວາມຍາກລຳບາກ
3. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນນັກກິລາ ຂໍ້ 5**	ຕ້ອງດຳເນີນຊີວິດຕາມກົດແຫ່ງຄວາມຊອບທຳ
4. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນກະສິກອນ ຂໍ້ 6**	ຕ້ອງເຮັດວຽກໜັກ
5. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນຄົນງານ ຂໍ້ 15**	ຕ້ອງໃຊ້ພະວັດຈະນະຂອງພະເຈົ້າຢ່າງຖືກຕ້ອງ
6. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນພາຊະນະ ຂໍ້ 20-23**	ຕ້ອງຮັບການຊຳລະຈາກບາບ
7. ຜູ້ຮັບໃຊ້ພະເຈົ້າໃນຖານະທີ່**ເປັນທາດ ຂໍ້ 24-26**	ຕ້ອງຮັບໃຊ້ເຈົ້ານາຍຢ່າງຖ່ອມໃຈ

**ສ.	ການຊົງເອີ້ນຂອງພະເຈົ້າ**

ກ່າວໂດຍທົ່ວໄປ ເຖິງແມ່ນພະເຈົ້າຈະຊົງເອີ້ນຜູ້ເຊື່ອທຸກຄົນໃຫ້ປະກາດ ແລະແບ່ງປັນພະກິດຕິຄຸນ ແຕ່ພະອົງຊົງເອີ້ນຄົນບາງຄົນເປັນພິເສດໃຫ້ຮັບໃຊ້ພະອົງໃນ "ແບບເຕັມເວລາ"

ຈະມີໄລຍະນຶ່ງທີ່ງານໃນພັນທະກິດເລີ້ມຫລາຍຂື້ນຈົນຜູ້ຮັບໃຊ້ພະເຈົ້າຕ້ອງຍອມລາອອກຈາກງານອາຊີບແລ້ວເຂົ້າມາຮັບໃຊ້ໃນພັນທະກິດແບບເຕັມເວລາ ບັນດາສາວົກໃນຍຸກທຳອິດຕ່າງກໍໄດ້ຮັບການຊົງເອີ້ຍຈາກພະເຈົ້າໃຫ້ປະຖິ້ມງານອາຊີບຂອງຕົນ

**ໂຢຮັນ 1:35-51 ແລະມັດທາຍ 4:19**

ຜູ້ຮັບໃຊ້ພະເຈົ້າ ຈະຕ້ອງມີ<u>**ການຊົງເອີ້ນ**</u>ຈາກພະເຈົ້າຢູ່ເໜືອຊີວິດ **ເຮັບເລີ 5:4**

ບໍ່ແມ່ນແຕ່ງານອາຊີບອີກຊະນິດນຶ່ງ ເຮັດໄປເພື່ອຫາເງິນ

ການຊົງເອີ້ນຂອງພະເຈົ້ານັ້ນເອງທີ່ຈະຊ່ວຍໃຫ້ຜູ້ຮັບໃຊ້ພະເຈົ້າ**ຢືນຢັດ**ຢູ່ໄດ້ໃນຍາມລຳບາກ ແລະທໍ້ໃຈ

1.	ຕົວຢ່າງຈາກພະຄຳພີ ຂອງຄົນຊຶ່ງມີການຊົງເອີ້ນຈາກພະເຈົ້າ

ກ)	ໂມເຊ	**ອົບພະຍົບ 3**
	ຈຸດປະສົງ	ປົດປ່ອຍປະຊາກອນຂອງພະເຈົ້າ

ຂ)	ກີເດໂອນ	**ຜູ້ວິນິໄສ 6:11-25**
	ຈຸດປະສົງ	ເພື່ອເຮັດສົງຄາມ

ຄ)	ເຢເລມີ	**ເຢເລມີ 1:4-10**

ຈຸດປະສົງ ເພື່ອກ່າວພະວັດຈະນະຂອງພະເຈົ້າ

ງ) ໂຢນາ **ໂຢນາ 1-4**

ຈຸດປະສົງ ໄປຍັງເມືອງທີ່ຊົ່ວຮ້າຍ

ຈ) ຊາມູເອນ **1ຊາມູເອນ 3**

ຈຸດປະສົງ ເປັນປະໂລຫິດຂອງພະເຈົ້າ

ສ) ໂປໂລ **ໂລມ 15:16**

ຈຸດປະສົງ ປະກາດຂ່າວດີແກ່ຊົນຕ່າງຊາດ

2. ຮູ້ເຖິງການຊົງເອີ້ນຂອງພະເຈົ້າ

ກ) ພະເຈົ້າຕັດທາງພະວັດຈະນະຂອງພະອົງ **2ຕີໂມທຽວ 3:16**

**ໂຢນາ** 1:1 - ພະວັດຈະນະຂອງພະເຈົ້າມາ..

ຂ) ການຢືນຢັນໂດຍທີ່ປຶກສາຊຶ່ງຢຳເກງພະເຈົ້າ **ສຸພາສິດ 15:22,20:18**

ຄ) ສັນຕິສຸກຂອງພະເຈົ້າ **ຟີລິບບອຍ 4:6-7**

ງ) ສະຖານະການແວດລ້ອມ ໃນກໍລະນີຂອງໂຢນາ ພະເຈົ້າຊົງໃຊ້ສະຖານະການ ຕໍ່ຕ້ານ ເພື່ອເຮັດໃຫ້ເຂົາຈົນມຸມ

ຈ) ພະຍານຈາກໃນວິນຍານ ໂລມ 8:16 ພະວິນຍານເປັນພະຍານຮ່ວມກັບວິນຍານຂອງເຮົາ

ສ) ຄວາມຝັນ **ໂຢເອນ 2:28**

ຊ) ສຽງກ່າວ **1ຊາມູເອນ 3:4,6,8**

ຍ) ຄຳພະຍາກອນ **ກິດຈະການ 13:1-3**

ຊ. ການສ້າງມາດຕະຖານທາງດ້ານຈະລິຍະທຳໃນງານພັນທະກິດ

ຈະລິຍະທຳຄື ຄວາມເຊື່ອພື້ນຖານຊຶ່ງເປັນຕົວກຳນົດພຶດຕິກຳ ແລະຮູບແບບການດຳເນີນຊີວິດຂອງເຮົາ

ກຸນແຈສຳຄັນ:

ຄວາມຮັກອາກາເປຂອງພະເຈົ້າ : **1ໂກຣິນໂທ 13**

ແລະສັດຈະທຳຂອງພະເຈົ້າ : **2ຕີໂມທຽວ 3:16**

1. ສິດຍາພິບານກັບງານ

ກ) ເນື່ອງຈາກສິດຍາພິບານຕ້ອງຄວບຄຸມເວລາດ້ວຍຕົນເອງ ເຂົາຈຶ່ງຕ້ອງເປັນຜູ້ອາລັກຂາທີ່ດີ ແລະບົວລະບັດຄຣິສຕະຈັກຢ່າງພໍພຽງ ບໍ່ແມ່ນ “ເທດສະນາວັນອາທິດ ເຫລືອນັ້ນພັກວັນນອນຫລັບຕະຫລອດ”

ຂ) ສະຫງວນເວລາໄວ້ເພື່ອຕຽມພະວັດຈະນະຂອງພະເຈົ້າ ເພື່ອລ້ຽງດູສະມາຊິກຄຣິສຕະຈັກ

GCI

ຄ)	ເຂົາຕ້ອງເວົ້າຄວາມຈິງ ໂດຍປັດສະຈາກຄວາມຢ້ານ ຫລືເອົາອົກເອົາໃຈໃຜ

ງ)	ເປັນເລື່ອງຜິດຈະລິຍະທຳທີ່ສິດຍາພິບານຈະຍົກຄຳເທດສະນາຂອງຄົນອື່ນມາເທດໂດຍບໍ່ໄດ້ໃຫ້ກຽດແກ່ເຈົ້າຂອງເລື່ອງ

2.	ສິດຍາພິບານກັບສະມາຊິກຄຣິສຕະຈັກ

ກ)	ເປັນເລື່ອງທີ່ຜິດຈະລິຍະທຳສຳລັບສິດຍາພິບານ ຖ້າເຂົາເຮັດຜິດຂໍ້ຕົກລົງທີ່ໃຫ້ໄວ້ແກ່ຄຣິສຕະຈັກ

ຂ)	ເຂົາຈະຕ້ອງບໍ່ເປີດເຜີຍຄວາມລັບຂອງສະມາຊິກຄຣິສຕະຈັກໂດຍບໍ່ຂໍອະນຸຍາດກ່ອນ

ຄ)	ເປັນເລື່ອງທີ່ຜິດຈະລິຍະທຳສຳລັບສິດຍາພິບານທີ່ຕິດໜີ້ ແລະບໍ່ຊຳລະຄ່າໃຊ້ຈ່າຍຂອງຕົນ ເຂົາຕ້ອງເປັນຄົນທີ່ຊື່ສັດ

ງ)	ຖ້າສິດຍາພິບານໄດ້ຮັບຄ່າຕອບແທນຈາກຄຣິສຕະຈັກແລ້ວ ເຂົາຈະຕ້ອງບໍ່ອອກໄປເຮັດວຽກຫາລາຍໄດ້ພິເສດໂດຍບໍ່ປຶກສາກັບຄະນະກຳມະການຄຣິສຕະຈັກ

3.	ສິດຍາພິບານກັບເພື່ອນຜູ້ຮັບໃຊ້ພະເຈົ້າ

ກ)	ເປັນເລື່ອງຜິດຈະລິຍະທຳທີ່ຈະເຂົ້າໄປສອດແຊກງານຂອງຄຣິສຕະຈັກອື່ນ

ຂ)	ຕ້ອງລະມັດລະວັງທີ່ຈະບໍ່ລັກລູກແກະ

ຄ)	ຕ້ອງບໍ່ກ່າວເຖິງສິດຍາພິບານຄຣິສຕະຈັກອື່ນໃນແງ່ຮ້າຍ

4.	ສິດຍາພິບານກັບສິດຍາພິບານຄົນກ່ອນ

**ໂລມ 14:4** "ທ່ານເປັນໃຜ ຈຶ່ງກ່າວໂທດຄົນໃຊ້ຂອງຄົນອື່ນ ຄົນໃຊ້ຄົນນັ້ນຈະໄດ້ດີ ຫລືຈະຫລົ້ມຈົມກໍສຸດແລ້ວແຕ່ນາຍຂອງເຂົາ ແລະເຂົາກໍຈະໄດ້ດີແນ່ນອນ ເພາະວ່າອົງພະຜູ້ເປັນເຈົ້າຊົງລິດອາດໃຫ້ເຂົາໄດ້ດີໄດ້"

ກ)	ກ່າວເຖິງສິດຍາພິບານຄົນກ່ອນໃນແງ່ດີ

ຂ)	ສະແດງຄວາມປະທັບໃຈໃນຄວາມດີທີ່ເຂົາເຄີຍເຮັດໄວ້

ຄ)	ຖ້າເຂົາກັບມາຢ້ຽມຄຣິສຕະຈັກ ໃຫ້ກ່າວສະແດງຄວາມຍິນດີຕ້ອນຮັບ

ງ)	ເມື່ອຮັບຊ່ວງງານແລ້ວ ຢ່າປ່ຽນແປງວິທີການທີ່ເຂົາວາງໄວ້ໃນທັນທີທັນໃດ ເຂົາຄົງມີເຫດຜົນທີ່ດີບາງຢ່າງໃນການຈັດແນວທາງງານໄວ້ຢ່າງນັ້ນ

ເມື່ອເຖິງເວລານຶ່ງ ທ່ານກໍຈະຖືກແທນທີ່ໂດຍສິດຍາພິບານຄົນໃໝ່ ຈົ່ງປະຕິບັດຕໍ່ຜູ້ຢູ່ກ່ອນທ່ານຢ່າງທີ່ທ່ານຕ້ອງການໃຫ້ສິດຍາພິບານໃໝ່ປະຕິບັດຕໍ່ທ່ານໃນອານາຄົດ

GCI

5. ສິດຍາພິບານກັບຜູ້ຮັບຊ່ວງຕໍ່

ກ) ໃຫ້ຄວາມຊ່ວຍເຫລືອແກ່ຜູ້ຮັບຊ່ວງຕໍ່ ຢ່າງເຕັມທີ່ເທົ່າທີ່ທ່ານຈະເຮັດໄດ້

ຂ) ກະສຽມຈາກງານຢ່າງສະຫງ່າງາມ ແລະໃຫ້ຜູ້ຮັບຊ່ວງຕໍ່ໄດ້ຂຶ້ນມາແທນທີ່ ໂຢຮັນຜູ້ໃຫ້ບັບຕິດສະມາ ມີທັດສະນະຄະຕິທີ່ດີເມື່ອທ່ານກ່າວເຖິງພະເຢຊູວ່າ "ພະອົງຈະຕ້ອງຍິ່ງໃຫຍ່ຂຶ້ນ ສ່ວນຂ້າພະເຈົ້າຈະນ້ອຍລົງ**" (ໂຢຮັນ 3:30)**

ຄ) ຖ້າສະມາຊິກເກົ່າຂອງທ່ານ ມາຫາທ່ານເພື່ອຂໍຮັບຄໍາປຶກສາ ເປັນການດີທີ່ຈະໜູນໃຈໃຫ້ເຂົາຮູ້ສຶກໝັ້ນໃຈໃນສິດຍາພິບານຄົນໃໝ່

ງ) ຢ່າຮູ້ສຶກອິດສາ ຖ້າຜູ້ຮັບຊ່ວງຕໍ່ທ່ານປະສົບຄວາມສໍາເລັດຫລາຍກວ່າ ຄົນທີ່ຢູ່ຝ່າຍເນື້ອໜັງ ແລະໃຈແຄບເທົ່ານັ້ນທີ່ຮູ້ສຶກອິດສາຄົນອື່ນ

ຈ) ຖ້າທ່ານໄດ້ຮັບການຮ້ອງຂໍໃຫ້ປະກອບພິທີໃດໆ ແກ່ສະມາຊິກເກົ່າເຊັ່ນ ງານແຕ່ງງານ ຫລືງານສົບ ຈະເປັນການດີຍິ່ງທີ່ທ່ານຈະປຶກສາກັບຜູ້ຮັບຊ່ວງຕໍ່ເສັຽກ່ອນ

6. ສິດຍາພິບານກັບເງິນທອງ

ນັບໄດ້ວ່າໂປໂລສັດຊື່ຢ່າງຍິ່ງທີ່ໄດ້ເຕືອນຕີໂມທຽວ ແລະບັນດາລູກສິດຂອງເຂົາເຖິງອັນຕະລາຍ ແລະຫລຸມພາງໃນເລື່ອງເງິນທອງນີ້.

ກ) ໃນບາງສະຖານະການ ເປັນເລື່ອງປົກກະຕິທີ່ສິດຍາພິບານຈະຮ້ອງຂໍຕໍ່ກໍາມະການ ແລະສະມາຊິກຄຣິສຕະຈັກໃຫ້ຂຶ້ນເງິນເດືອນໃຫ້ ເມື່ອຄຣິສຕະຈັກມີເງິນຫລາຍຂຶ້ນ ເຂົາກໍສາມາດຈ່າຍເງິນໄດ້ຫລາຍຂຶ້ນນໍາ ຄາລະວາດທີ່ຮັກພະເຈົ້າສາວນໃຫຍ່ເມື່ອເຫັນຄວາມຈໍາເປັນກໍຈະພະຍາຍາມເຮັດອັນໃດຈັກຢ່າງເພື່ອສະໜັບສະໜູນໃນເລື່ອງນີ້ ແຕ່ການທີ່ຈະຢູ່ໂດຍຮັບຄ່າຕອບແທນຕໍ່າກວ່າທີ່ສົມຄວນກໍດີກວ່າຈະໃຊ້ລູກໄມ້ບີບບັງຄັບໃຫ້ຄົນຖວາຍໃຫ້"

ຂ) ງານທຸລະກິດສິດຍາພິບານ

ບາງຄັ້ງໃນຄຣິສຕະຈັກນ້ອຍໆ ມີຄວາມຈໍາເປັນທີ່ສິດຍາພິບານຕ້ອງເຮັດວຽກເສີມເພື່ອລ້ຽງດູຕົນເອງ ແລະຄອບຄົວ ຊຶ່ງຄວນຖືວ່າເປັນສິ່ງທີ່ເຮັດພຽງຊົ່ວຄັ້ງຊົ່ວຄາວ

GCI

**2ຕີໂມທຽວ 2:4** "ບໍ່ມີທະຫານຄົນໃດທີ່ເຂົ້າປະຈຳການແລ້ວຈະຫຍຸ້ງຢູ່ກັບງານຝ່າຍພົນລະເຮືອນ ດ້ວຍວ່າເຂົາມຸ້ງທີ່ຈະເຮັດໃຫ້ຜູ້ບັງຄັບບັນຊາພໍໃຈ"

ພະຄຳພີບອກເຮົາໄວ້ໃນ **1ໂກຣິນໂທ 5:18** ວ່າ ຄົນງານສົມຄວນໄດ້ຮັບຄ່າຈ້າງຂອງຕົນ

ຄ)    ສິດຍາພິບານຄວນສ້າງໜີ້ສິນຫລືບໍ່?

ໜີ້ສິນເປັນສິ່ງທີ່ບໍ່ດີສຳລັບນັກເທດ ເຂົາຄວນມີວິໄນໃຊ້ເງິນເທົ່າທີ່ສາມາດຫາໄດ້ຫລາຍກວ່າ ເມື່ອເຖິງຄາວຈຳເປັນທີ່ສິດຍາພິບານຕ້ອງຢືມເງິນ ກໍບໍ່ຄວນຢືມຈາກຄັງຄຣິສຕະຈັກ ແລະກໍບໍ່ເປັນການດີທີ່ຈະຂໍຢືມຈາກສະມາຊິກຄຣິສຕະຈັກ ຄວນຈະກູ້ຢືມຈາກທະນາຄານຫລືສະຖາບັນການເງິນຈະດີກວ່າ ເພື່ອໃຫ້ພັນທະສູພັນຕ່າງໆເປັນໄປຕາມຮູບແບບຂອງທຸລະກິດ

ແຕ່ໂດຍທົ່ວໄປແລ້ວ ສິດຍາພິບານຄວນຫລີກລ້ຽງຈາກການເປັນໜີ້ ຖ້າລາຍໄດ້ຂອງເຂົາມີຈຳກັດ ເຂົາຄວນຊື້ສິນຄ້າຕ່າງໆໂດຍເງິນສົດຈະດີກວ່າ

ງ)    ສິດຍາພິບານກັບເງິນຂອງຄຣິສຕະຈັກ

ສິດຍາພິບານບໍ່ຄວນນຳເງິນຂອງຄຣິສຕະຈັກໄປໃຊ້ໃນເລື່ອງສ່ວນຕົວ ເຖິງແມ່ນວ່າເຂົາຈະຕັ້ງໃຈທີ່ຈະຄືນພາຍຫລັງກໍຕາມ

ສິດຍາພິບານບໍ່ຄວນເຮັດໜ້າທີ່ເປັນນາຍຄັງຂອງກອງທຶນໃດໆ ຂອງຄຣິສຕະຈັກ

## II.  ຄວາມສຳພັນພື້ນຖານຂອງສິດຍາພິບານ

ເນື້ອຫາໃນຕອນນີ້ ເຮົາຈະພິຈາລະນາກັນເຖິງເລື່ອງ

- ຄວາມສຳພັນກັບພະເຈົ້າ
- ຄວາມສຳພັນກັບພັນລະຍາແລະຄອບຄົວ
- ຄວາມສຳພັນກັບສະມາຊິກຄຣິສຕະຈັກ
- ຄວາມສຳພັນກັບຜູ້ນຳຄຣິສຕະຈັກທ້ອງຖິ່ນ

ກ.    ຄວາມສຳພັນລະຫວ່າງສິດຍາພິບານກັບພະເຈົ້າ

GCI



ສິດຍາພິບານຕ້ອງມີຄວາມສຳພັນກັບພະເຈົ້າ ຊຶ່ງເປັນສ່ວນທີ່ຈະເຮັດໃຫ້ຊີວິດໄຫລຜ່ານຕົວເຂົາໄປສູ່ສະມາຊິກໃນຄຣິສຕະຈັ**ກ ມັດທາຍ 6:33**

ບັນດາຜູ້ຮັບໃຊ້ພະເຈົ້າທີ່ຍິ່ງໃຫຍ່ຕ່າງເປັນພະຍານເຖິງຄວາມສຳຄັນຂອງການມີຄວາມສຳພັນກັບພະເຈົ້າ **ໂຢຮັນ 15:5**

ອີເອັມ ບລາວ ກ່າວໄວ້ວ່າ "ສິ່ງທີ່ຄຣິສຕະຈັກຂາດໃນທຸກມື້ນີ້ ບໍ່ແມ່ນເຄື່ອງຈັກເຄື່ອງມື ບໍ່ແມ່ນການບໍລິຫານຈັດການສະໄໝໃຫມ່ ຫລືວິທີການອັນລ້ຳເລີດ ແຕ່ເປັນນັກອະທິຖານຜູ້ເຂັ້ມແຂງ ພະວິນຍານບໍລິສຸດບໍ່ໄດ້ເຈີມແຜນການຂອງເຮົາ ແຕ່ຊົງເຈີມນັກອະທິຖານ " ( ອີ ເອັມ ບລາວ ພະລັງອະທິຖານ ໜ້າ 12)

1. ພະວັດຈະນະຂອງພະເຈົ້າ
   - ກ) ພະວັດຈະນະຂອງພະເຈົ້າຄືຂຸມພະລັງຂອງເຮົາໃນການເຮັດພັນທະກິດ **ມັດທາຍ 4:4**
   - ຂ) ພະວັດຈະນະຂອງພະເຈົ້າຊ່ວຍປົກປ້ອງເຮົາຈາກການເຮັດບາບ **ເພງສັນລະເສີນ** 119:11
   - ຄ) ພະວັດຈະນະຂອງພະເຈົ້າມີພະລັງຊ່ວຍໃຫ້ພົ້ນ **ໂລມ 1:15**
   - ງ) ພະວັດຈະນະຂອງພະເຈົ້າຄືອາວຸດຂອງເຮົາ **ເອເຟໂຊ 6:17**
   - ຈ) ພະວັດຈະນະຂອງພະເຈົ້າຊີ້ທາງໃຫ້ແກ່ເຮົາ **ເພງສັນລະເສີນ** 119:105
   - ສ) ພະວັດຈະນະຂອງພະເຈົ້າຊ່ວຍປ້ອງກັນເຮົາຈາກການສອນຜິດ **ມັດທາຍ 22:29**
   - ຊ) ພະວັດຈະນະຂອງພະເຈົ້າເຮັດໃຫ້ເຮົາປະສົບຄວາມສຳເລັດ **ໂຢຊວຍ 1:8**

2. ການອະທິຖານ

   - ກ) ເຮົາໄດ້ຮັບຄຳສັ່ງໃຫ້ອະທິຖານ **1ເທຊະໂລນິກ 5:17**
     "ຈົ່ງສະແຫວງຫາພະເຈົ້າ ແລະພະກຳລັງຂອງພະອົງ ສະແຫວງຫາພະພັກຂອງພະອົງເລື້ອຍໄປ" **1ພົງສາວະດານ 16:11**

   - ຂ) ການອະທິຖານຊ່ວຍປ້ອງກັນເຮົາບໍ່ໃຫ້ຕົກຢູ່ໃນການທົດລອງ **ມັດທາຍ 26:41**

   - ຄ) ບັນດາຜູ້ຮັບໃຊ້ພະເຈົ້າ ຕ່າງກໍເປັນນັກອະທິຖານ
     1) ໂມເຊ **ອົບພະຍົບ 17:11**
     2) ຊາມູເອນ **1ຊາມູເອນ 7:9**
     3) ດານີເອນ **ດານີເອນ 6:10**

   - ງ) ພະເຢຊູຊົງທຸ້ມເທໃນການອະທິຖານ:

GCI

1) **ມາລະໂກ 1:35** - ໃນຍາມເຊົ້າ
2) **ມາລະໂກ 6:46** - ສະເດັດໄປພູເຂົາເພື່ອອະທິຖານ
3) **ລູກາ 6:12** - ໃຊ້ເວລາຕະຫລອດຄືນໃນການອະທິຖານ

ຈ) ຜູ້ນໍາຄຣິສຕະຈັກຍຸກທໍາອິດໃຊ້ເວລາອະທິຖານ **ກິດຈະການ 6:4**

3. ການເຊື່ອຟັງ

ອັນຕະລາຍໃຫຍ່ຫລວງຂອງຜູ້ທີ່ເປັນສິດຍາພິບານຄື ເຂົາພະຍາຍາມສອນໃຫ້ຄົນອື່ນເຊື່ອຟັງ ແຕ່ຕົວເອງອາດບໍ່ເຊື່ອຟັງພະວັດຈະນະຂອງພະເຈົ້າ

ກ) ພະເຈົ້າປະສົງການເຊື່ອຟັງຂອງເຮົາ ຫລາຍກວ່າການຮັບໃຊ້ **1ຊາມູເອນ 15:22-23**

ຂ) ຕົວຢ່າງຂອງບຸກຄົນຊຶ່ງເຊື່ອຟັງພະເຈົ້າ

1) ໂນອາ **ປະຖົມມະການ 46:22**
2) ອັບລາຮາມ **ປະຖົມມະການ 22:4**
3) ໂຢຊວຍ **ໂຢຊວຍ 11:15**
4) ໂປໂລ **ກິດຈະການ 26:19**

ຄ) ການເຊື່ອຟັງພະເຈົ້າຄືກຸນແຈສໍາຄັນທີ່ເຮັດໃຫ້ມີຄວາມຮູ້ຝ່າຍວິນຍານ **ໂຢຮັນ 7:17**

ຂ. ຄວາມສໍາພັນລະຫວ່າງສິດຍາພິບານກັບພັນລະຍາ ແລະລູກ

**ເອເຟໂຊ 5:22, 6:4 ແລະ 1ເປໂຕ 3:1-7**

ຂໍ້5: "ຝ່າຍພັນລະຍາ ຈົ່ງຍອມຟັງສາມີຂອງຕົນ ເໝືອນຍອມຟັງອົງພະຜູ້ເປັນເຈົ້າ "

ຂໍ້4: "ຝ່າຍທ່ານຜູ້ເປັນບິດາ ຢ່າຍົ້ວບຸດຂອງຕົນໃຫ້ເກີດໂທສະ" ແຕ່ຈົ່ງອົບຮົມບຸດດ້ວຍການສັ່ງສອນ ແລະການເຕືອນສະຕິຕາມຫລັກຂອງອົງພະຜູ້ເປັນເຈົ້າ"

1. ຄວາມສໍາຄັນຂອງການມີຄອບຄົວທີ່ໝັ້ນຄົງສໍາລັບສິດຍາພິບານ

ກ)  ສິດຍາພິບານຕ້ອງຮັບຜິດຊອບໃນການຕຽມຕົວຄົນອື່ນໆ ເພື່ອເຂົ້າສູ່ການສົມລົດ
ຂ)  ເຂົາຕ້ອງສັ່ງສອນຄົນທີ່ມີຄອບຄົວແລ້ວໃຫ້ໃຊ້ຊີວິດຄູ່ຮ່ວມກັນຢ່າງມີຄວາມສຸກ
ຄ)  ເຂົາຕ້ອງເປັນແບບຢ່າງໃຫ້ຄົນອື່ນປະພຶດຕາມ

2. ພັນລະຍາຂອງສິດຍາພິບານ:

**1ເປໂຕ 3:1-7**

ພັນລະຍາຂອງສິດຍາພິບານສາມາດສ້າງຫລືທຳລາຍສິດຍາພິບານໄດ້ ນາງສາມາດຊ່ວຍເຂົາໄດ້ໃນຈຸດອ່ອນທີ່ເຂົາມີຢູ່ຫລືຈະສວຍໂອກາດໂຈມຕີຈະອ່ອນຂອງເຂົາ ນາງສາມາດຢືນຢັດຄຽງຂ້າງເຂົາໃນຍາມທີ່ທໍ້ໃຈ ແລະຍາກລຳບາກ ພັນລະຍາຂອງໂຢບ.. ບໍ່ໄດ້ໜູນໃຈທ່ານເລີຍໃນເວລາທີ່ພົບກັບການທົດລອງ "ທ່ານຍັງຈະຍຶດໝັ້ນໃນຄວາມຊື່ສັດຂອງທ່ານອີກບໍ່ ຈົ່ງດ່າພະເຈົ້າ ແລະຕາຍເສັຽ" **ໂຢບ 2:9**

ກ)  ຮູບແບບການດຳເນີນຊີວິດຂອງນາງຕ້ອງເປັນແບບຢ່າງທີ່ດີ ເພື່ອສ້າງຄວາມປະທັບໃຈຈົນນຳຄົນມາເຖິງພະຄຣິດໄດ້ **ຂໍ້ 1-2**
ຂ)  ຕ້ອງເປັນຄົນທີ່ຍອມຢູ່ໃຕ້ອຳນາດຂອງສາມີ **ຂໍ້ 1**
ຄ)  ຕ້ອງມີຊີວິດທີ່ບໍລິສຸດ **ຂໍ້ 2**
ງ)  ຕ້ອງເນັ້ນຄວາມງາມພາຍໃນວິນຍານ ແທນການເນັ້ນຄວາມງາມພາຍນອກ ຂໍ້ 3
ຈ)  ຕ້ອງໃຫ້ຄວາມນັບຖືສາມີ **ຂໍ້ 6**
ສ)  ຕ້ອງເປັນຄູ່ອຸປະຖົມສຳລັບສາມີ ແນວທາງປະຕິບັດດັ່ງຕໍ່ໄປນີ້

1) ເປັນຕົວຂອງຕົວເອງ
   ສາມີແຕ່ງງານກັບທ່ານຕາມທີ່ທ່ານເປັນຢູ່
2) ຮູ້ວ່າທ່ານມີສ່ວນໃນງານພັນທະກິດ
   ເຂົາບໍ່ສາມາດເຮັດວຽກໄດ້ໂດຍປັດສະຈາກທ່ານ ແລະຕ້ອງການກຳລັງໃຈຈາກທ່ານ
3) ເປັນຜູ້ສະໜັບສະໜູນສາມີທາງດ້ານອາລົມ
   ບາງຄັ້ງສິດຍາພິບານຮູ້ສຶກທໍ້ໃຈ ແລະຕ້ອງການການສະໜັບສະໜູນທາງ ດ້ານອາລົມຈາກພັນລະຍາເຊັ່ນ ການສົນໃຈຟັງບັນຫາຂອງເຂົາ
4) ສະໜັບສະໜູນສາມີໂດຍການອະທິຖານ
   ບາງທີ ອາດບໍ່ມີໃຜອະທິຖານເພື່ອເຂົາເລີຍ ນອກຈາກພັນລະຍາ
5) ໜູນໃຈເຂົາໃຫ້ມຸ້ງເປົ້າໝາຍທີ່ສູງຂຶ້ນໄປອີກເພື່ອພະເຈົ້າ

GCI

ພັນລະຍາບາງຄົນ ຢາກຍຶດສາມີໄວ້ເປັນຕົນເອງ
ຈຶ່ງກາຍເປັນຕົວຂັດຂວາງເຂົາໄວ້ບໍ່ໃຫ້ຈະເລີນຂຶ້ນໃນງານພັນທະກິດ

6) ຢືນຢູ່ຄຽງຂ້າງເຂົາໃນຍາມວິກິດ ລວມທັງສິ່ງຊຶ່ງກ່ຽວຂ້ອງກັບສະມາຊິກຄຣິສຕະຈັກ
7) ເປັນຄົນທີ່ໄວ້ໃຈໄດ້ໃນເລື່ອງຄຳເວົ້າ
ມັດທາຍ 12:34 ກ່າວວ່າ "ດ້ວຍວ່າປາກນັ້ນ ເວົ້າຈາກສິ່ງທີ່ມາຈາກໃຈ"
8) ເປັນຄົນທີ່ໄວ້ໃນໄດ້ໃນເລື່ອງຄຳເວົ້າ
ມີວາລະສຳລັບການຮ້ອງໄຫ້ ວາລະຫົວ ການຫົວນັ້ນເປັນຢາຢ່າງດີ ສຳລັບພັນທະກິດທີ່ເຕັມໄປດ້ວຍຄວາມຕຶງຄຽດ **(ສຸພາສິດ 17:22)**
9) ໜູນໃຈໃຫ້ສິດຍາພິບານມີການສຶກສາພະຄຳພີ ແລະການຢ້ຽມຢາມຢ່າງເປັນລະບົບ ຂະນະທີ່ສິດຍາພິບານເປັນຜູ້ໃຫ້ ເຂົາກໍຕ້ອງຮັບຈາກຄົນອື່ນດ້ວຍ
10) ປົກປ້ອງເຂົາຈາກສິ່ງທີ່ອາດເປັນຜົນເສັຽຕໍ່ຊື່ສຽງຂອງເຂົາ
11) ສຳແດງໃຫ້ເຂົາເຫັນຄວາມມີນ້ຳໃຈ ແລະຄວາມອ່ອນໂຍນ
12) ເຮັດໜ້າທີ່ເປັນນັກວິຈານໃນເຊີງສ້າງສັນໃຫ້ສາມີ
13) ສຳແດງຄວາມມີນ້ຳໃຈຮັບຮອງແຂກໃຫ້ສະມາຊິກໄດ້ເຫັນ

3. ສິດຍາພິບານໃນຖານະສາມີ **ເອເຟໂຊ 5:22-23**

ກ) ໃນຖານະທີ່ເປັນຫົວ ສາມີມີໜ້າທີ່ໃນການນຳ **ຂໍ້ 23**
ເຂົາຄວນນຳຄອບຄົວໃນການຕັດສິນໃຈ ແລະເປັນຜູ້ນຳຝ່າຍວິນຍານ ເຂົາຄວນໜູນໃຈໃຫ້ຄອບຄົວໄດ້ອະທິຖານດ້ວຍກັນ

ຂ) ເຂົາຕ້ອງຮັກພັນລະຍາເໝືອນຢ່າງທີ່ພະຄຣິດຊົງຮັກ **ຂໍ້ 25,33**
ຄວາມຮັກເປັນສິ່ງທີ່ຫລາຍກວ່າອາລົມ

ຄ) ສາມີຕ້ອງຊຳລະພັນລະຍາ ຫລືໜູນໃຈໃຫ້ນາງມີຊີວິດທີ່ບໍລິສຸດ **ຂໍ້ 26**
ເຂົາຄວນໜູນໃຈໃຫ້ນາງດຳເນີນຊີວິດທີ່ຊອບທຳຕາມທາງພະເຈົ້າ ບໍ່ແມ່ນຕາມຢ່າງຊາວໂລກ

ງ) ສາມີຕ້ອງລ້ຽງດູ ແລະເອົາໃຈໃສ່ເບິ່ງແຍງ **ຂໍ້ 29**
ສາມີບາງຄົນຫວ່ງໃຍຄຣິສຕະຈັກຫລາຍກວ່າຄອບຄົວຂອງຕົນເອງ

ຈ) ສາມີຕ້ອງມີຄວາມເຂົ້າໃຈໃນພັນລະຍາ ຂໍ້ **1ເປໂຕ 3:7**
ການເປັນພັນລະຍາສິດຍາພິບານນັ້ນເປັນເລື່ອງຍາກ ເພາະນາງຕ້ອງແບກພາລະບັນຫາທີ່ສາມີກຳລັງປະເຊີນຢູ່

GCI



4. ສິດຍາພິບານໃນຖານະເປັນພໍ່ **1ຕີໂມທຽວ 3:4 ແລະເອເຟໂຊ 6:4**
"ຕ້ອງເປັນຄົນຄອບຄອງບ້ານເຮືອນຂອງຕົນໄດ້ດີ ອົບຮົມບຸດສະຕີຂອງຕົນໃຫ້ຢູ່ໃນໂອວາດ ແລະມີໃຈນົບນ້ອມ" **1ຕີໂມທຽວ 3:4**

"ຝ່າຍທ່ານຜູ້ເປັນບິດາ ຢ່າຢັ່ວບຸດຂອງຕົນໃຫ້ເກີດໂມໂຫ" ແຕ່ຈົ່ງອົບຮົມບຸດດ້ວຍການສັ່ງສອນ ແລະການເຕືອນສະຕິຕາມຫລັກຂອງອົງພະຜູ້ເປັນເຈົ້າ"

ກ) ສິດຍາພິບານຕ້ອງຈັດການຄອບຄົວຂອງຕົນໄດ້ດີ ເພື່ອລູກໆຈະໄດ້ນັບຖືເຂົາໃນຖານະທີ່ເປັນຜູ້ນໍາ **1ຕີໂມທຽວ 3:4**
ຂ) ເຂົາຕ້ອງຝຶກໃຊ້ວິໄນ ຖ້າຈໍາເປັນ **ສຸພາສິດ 13:2**
ຄ) ເຂົາຕ້ອງຝຶກອົບຮົມລູກໃນທາງຂອງພະເຈົ້າ **ເອເຟໂຊ 6:4**

5. ກຸນແຈສູ່ຄວາມຊື່ສັດ

ກ) ຫລີກລ້ຽງການຖືກເນື້ອຕ້ອງຕົວສະຕຣີອື່ນໃນລັກສະນະທີ່ຈະເຮັດໃຫ້ນາງ ຫລືຄົນອື່ນເຂົ້າໃຈຜິດ ແລະເປັນການບໍ່ເໝາະສົມ
ຂ) ພະຍາຍາມສ້າງຄວາມສໍາພັນແບບໃກ້ຊິດສະໜິດສະໜົມກັບພັນລະຍາ
ຄ) ຫລີກລ້ຽງການມີມິດຕະພາບທີ່ລຶກຊຶ້ງກັບເພດກົງກັນຂ້າມ
ງ) ປົກປ້ອງຮັກສາຄວາມຄິດໄວ້ໃຫ້ດີ **2ໂກຣິນໂທ 10:4-5**

ຄ. ຄວາມສໍາພັນລະຫວ່າງສິດຍາພິບານກັບສະມາຊິກຄຣິສຕະຈັກ

1. ຈົ່ງຮູ້ວ່າ ອົງພະເຢຊູເທົ່ານັ້ນທີ່ເປັນຜູ້ລ້ຽງຜູ້ຍິ່ງໃຫຍ່ **1ເປໂຕ 5:4**
ກ) ເປັນສິດຍາພິບານ ຕ້ອງຮັບໃຊ້ດ້ວຍຄວາມເຕັມໃຈ ບໍ່ແມ່ນດ້ວຍການຝືນໃຈ ຂໍ້2
ຂ) ລ້ຽງດູເຂົາດ້ວຍອາຫານຝ່າຍວິນຍານ **ມັດທາຍ 4:4**
ຄ) ນໍາໂດຍການເປັນແບບຢ່າງ **1ໂກຣິນໂທ 11:1**
ງ) ຝຶກຄົນໃຫມ່ໆໃຫ້ເຮັດໜ້າທີ່ອະພິບານສິດ **2ຕີໂມທຽວ 2:2**
ຈ) ປົກປ້ອງຄຣິສຕະຈັກຈາກຄໍາສອນປອມ **1ຕີໂມທຽວ 4:1,6**

2. ແນວທາງປະຕິບັດສໍາລັບຜູ້ລ້ຽງ
ກ) ເຮັດການຢ້ຽມຢາມ ຢ່າງສະໝໍ່າສະເໝີ ເຊັ່ນ ຕາມບ້ານ ໂຮງພະຍາບານ ຄຸກ..
ຂ) ຕ້ອງຢູ່ຄຽງຂ້າງສະມາຊິກໃນໂອກາດສໍາຄັນໃນຊີວິດຂອງເຂົາ ເຊັ່ນ ງານສົບ ການເກີດລູກ ການແຕ່ງງານ ຫລືເມື່ອເຂົາສູນເສັຽຊັບສິນ

ງ. ຄວາມສໍາພັນລະຫວ່າງສິດຍາພິບານກັບຜູ້ນໍາຄຣິສຕະຈັກທ້ອງຖິ່ນ

GCI



1. ສິດຍາພິບານຕ້ອງຕັ້ງເປົ້າທີ່ຈະມີຄວາມເປັນນ້ຳນຶ່ງໃຈດຽວກັນໃນວິນຍານ **ເຮັບເລີ 12:14** ການງານຂອງມານຄືການພະຍາຍາມສ້າງຄວາມແຕກແຍກ ແລະຄວາມສັບສົນວຸ້ນວາຍ ແຕ່ພະເຢຊູຊົງອະທິຖານຂໍໃຫ້ສາວົກຮັກຊຶ່ງກັນ ແລະກັນ ໃນ**ໂຢຮັນ 13:13**

2. ສິດຍາພິບານບໍ່ຄວນເບິ່ງຜູ້ນຳຄົນອື່ນເປັນເໝືອນຄູ່ແຂ່ງ ແຕ່ເປັນເພື່ອນຮ່ວມງານເພື່ອເສີມບົດບາດຊຶ່ງກັນແລະກັນ 1ໂກຣິນໂທ 12:12
ສິດຍາພິບານຄວນມີທ່າທີທີ່ຖ່ອມໃຈໃນການກ່ຽວຂ້ອງກັບຜູ້ນຳຄຣິສຕະຈັກອື່ນໆ ໃນທ້ອງຖິ່ນ ເຂົາຕ້ອງບໍ່ເປັນຄົນເຍີ່ຍິ່ງ ຫລືອິດສາຄຣິສຕະຈັກອື່ນ ຫລືສິດຍາພິບານຄົນອື່ນ ເຂົາຄວນໃຫ້ຄວາມຮ່ວມມືກັບຄົນອື່ນໆຢ່າງເຕັມທີ່ ສິ່ງດີອັນນຶ່ງທີ່ຄວນເຮັດຄື ການເຊີນຜູ້ນຳຄຣິສຕະຈັກອື່ນໆ ມາເທດສະໜາ ແລກປ່ຽນທຳມາດກັນ ຫລືຖວາຍຊັບຊ່ວຍເຫລືອກັນແລະກັນເມື່ອມີໂອກາດ

3. ສິດຍາພິບານຄວນຮູ້ດີວ່າ ສະຕິປັນຍາສາມາດມາຈາກຜູ້ນຳຂອງຄຣິສຕະຈັກອື່ນໆໄດ້ ສຸພາສິດ 15:22

   ສິດຍາພິບານຈະຕ້ອງບໍ່ຄິດວ່າ ຕົວເອງຮູ້ໝົດແລ້ວ ຕ້ອງເປີດໃຈຮຽນຮູ້ຈາກສິດຍາພິບານທ່ານອື່ນ ເພື່ອເສີມທັກສະຕົນເອງໃນການລ້ຽງດູຄຣິສຕະຈັກ

4. ສິດຍາພິບານຄວນສະແຫວງຫາຊ່ອງທາງທີ່ຈະບົວລະບັດ ບໍ່ແມ່ນໃຊ້ອຳນາດບີບບັງຄັບ **ມາລະໂກ 10-45**

ຈ. ຄວາມສຳພັນລະຫວ່າງສິດຍາພິບານກັບຊຸມຊົນ ( ໝູ່ບ້ານ, ເມືອງ ແລະອື່ນໆ )

1. ເປັນປະຊາຊົນທີ່ປະພຶດຕາມກົດໝາຍ **ໂລມ 13**
2. ເປັນແສງສະຫວ່າງໃຫ້ແກ່ຄົນຫລົງຫາຍ **ມັດທາຍ 5:14-16, ໂຢຮັນ 8:12**,ພະເຢຊູຊົງເປັນຄວາມສະຫວ່າງ
3. ສວຍໂອກາດແບ່ງປັນພະກິດຕິຄຸນໂດຍການເຮັດຄວາມດີ **ເອເຟໂຊ 5:16**

## III. ຄວາມຮັບຜິດຊອບຂອງສິດຍາພິບານ

ກ. ສິດຍາພິບານກັບການເທດສະໜາ

**2ຕີໂມທຽວ 4:2** ຈົ່ງປະກາດພະວັດຈະນະ

1. ວາງແຜນການເທດສະໜາ
   ມີລະບົບລະບຽບ
   ເຊັ່ນ ເທດສະໜາ ແລະສັ່ງສອນພະຄຳພີເປັນເຫລັ້ມໆໄປ
   ຫລື ເທດສະໜາແບບຫົວເລື່ອງ
2. ຢ່າຍົກຄຳເທດສະໜາຂອງຄົນອື່ນມາເທດ ໂດຍທີ່ບໍ່ໄດ້ໃຫ້ກຽດແກ່ເຈົ້າຂອງເລື່ອງ
3. ໃນການເທດສະໜາຕ້ອງວະວັງທີ່ຈະບໍ່ຍົກຕົວຢ່າງຈາກສະມາຊິກໃນຄຣິສຕະຈັກ ບາງຄັ້ງສະມາຊິກຮູ້ສຶກເສັຽໃຈ ແລະບໍ່ພໍໃຈເພາະສິດຍາພິບານ ເອົາເລື່ອງບັນຫາຂອງເຂົາໄປເລົ່າໃຫ້ທີ່ປະຊຸມຟັງ
4. ຈົດດບັນທຶກໄວ້ວ່າທ່ານເທດສະໜາເລື່ອງໃດໄປແດ່ແລ້ວ ເຄີຍເທດສະໜາເລື່ອງນັ້ນໆຕອນໃດ ບ່ອນໃດ ການເທດສະໜາເລື່ອງດຽວກັນຊ້ຳສອງບໍ່ແມ່ນເລື່ອງຜິດ

   ຕົວຢ່າງ ໂປໂລເທດສະໜາກັບຊາວໂກຣິນໂທ ເອເຟໂຊ ແລະໂລມ

5. ພັດທະນາຕົນເອງໃຫ້ເຕີບໃຫຍ່ຂຶ້ນ ແລະຮຽນຮູ້ຢູ່ສະເໝີ
   "ທັງນັກປາດຈະໄດ້ຍິນ ແລະເພີ່ມພູນການຮຽນຮູ້ ແລະຄົນທີ່ມີຄວາມເຂົ້າໃຈຈະໄດ້ຄວາມຊຳຊອງ"
   **ສຸພາສິດ 1:5**
   ຈົດບັນທຶກຂໍ້ຄິດດີໆ ທີ່ໄດ້ຍິນໄດ້ຟັງ
   ອາດໃຊ້ເຈັ້ຽບັນທຶກຂະໜາດ 3X5

ຂ. ສິດຍາພິບານກັບການນະມັດສະການ

**ໂຢຮັນ 4:24**

1. ການປະຊຸມນະມັດສະການ

   ກ) **<u>ການຊົງເອີ້ນ</u>**ໃຫ້ນະມັດສະການ

   "ມາເຖີດ ໃຫ້ເຮົາທັງຫລາຍຮ້ອງເພັງຖວາຍພະເຈົ້າ ໃຫ້ເຮົາເຮັດສຽງຊື່ນບານຖວາຍ ພະສີລາແຫ່ງຄວາມພົ້ນຂອງພວກເຮົາ ໃຫ້ເຮົາທັງຫາຍເຂົ້າມາຢູ່ສະເພາະເບື້ອງພະພັກດ້ວຍໂມທະນາ ໃຫ້ເຮົາເຮັດສຽງຊື່ນບານຖວາຍພະອົງດ້ວຍບົດເພງສັນລະເສີນ" **ເພັງສັນລະເສີນ 95:12**

   ຂ) **<u>ຄຳພະຍານ</u>**

GCI

ເປັນໂອກາດທີ່ສະມາຊິກຈະໄດ້ແບ່ງປັນເຖິງເລື່ອງຄຸນຄວາມດີຂອງພະເຈົ້າ ຄວນໜູນໃຈຜູ້ເຊື່ອໃຫ້ເປັນພະຍານ ແຕ່ຢ່າໃຫ້ກາຍເປັນການເທດສະໜາ ຊຶ່ງເປັນການຍາດເວລານັກເທດ

ຄ) **<u>ອະທິຖານ</u>**

ຜູ້ເຊື່ອອາດໃຊ້ເວລາໃນການອະທິຖານເພື່ອຊຶ່ງກັນແລະກັນ
**ຢາໂກໂບ 5:16**

ງ) **<u>ການຖວາຍຊັບ</u>**
ຄວນສອນໃຫ້ຜູ້ເຊື່ອຮູ້ວ່າການຖວາຍຊັບເປັນຮູບແບບນຶ່ງຂອງການນະມັດສະການ ແລະຄວນມີການຕຽມໄວ້ໃຫ້ພ້ອມເພື່ອຮັບການຖວາຍ **2ໂກຣິນໂທ 9:6-8**

ຈ) ເທດສະໜາ
ຄວນໃຫ້ເວລາຫລາຍພໍສຳລັບການເທດສະໜາພະວັດຈະນະຂອງພະເຈົ້າ

ສ) ການນະມັດສະການປິດທ້າຍ ແລະການເອີ້ນໃຫ້ຕອບສະໜອງ

ຄືຊ່ວງເວລາເປີດໂອກາດໃຫ້ຄົນໂຕ້ຕອບສະໜອງຕໍ່ຄຳເທດສະໜາ ໂດຍການອອກມາຂ້າງໜ້າເພື່ອຮັບການອະທິຖານເພື່ອ

ຊ) ພິທີບັບຕິດສະມາໃນນ້ຳ

ການຈັດພິທີບັບຕິດສະມາໃນນ້ຳ ເປັນໂອກາດທີ່ຈະໃຫ້ຜູ້ເຊື່ອໃຫມ່ໄດ້ປະກາດຄວາມເຊື່ອຂອງຕົນຕໍ່ສາທາລະນະຊົນ ບາງຄຣິສຕະຈັກຈັດພິທີໃນອາຄານ ບາງຄຣິສຕະຈັກຈັດໃນທີ່ສາທາລະນະ ເຊັ່ນ ໃນແມ່ນ້ຳ ຫລືຊາຍທະເລເປັນຕົ້ນ

1. ຜູ້ທີ່ຈະຮັບບັບຕິສະມາ
   ຕ້ອງຜ່ານການອົບຮົມພະຄຳພີໃນເລື່ອງຄວາມໝາຍຂອງພິທີແລະການກັບໃຈໃຫມ່
2. ແນະນຳໃຫ້ເຂົາແຕ່ງຕົວໃຫ້ເໝາະສົມ
3. ສອນໃຫ້ເຂົາຮູ້ວິທີເປັນພະຍານສັ້ນໆ
4. ຕົວຢ່າງຂອງການປະກອບພິທີບັບຕິດສະມາໃນນ້ຳ

   ສິດຍາພິບານ ຫລືຜູ້ນຳ "ທ່ານສັນຍາທີ່ຈະເລີກປະພຶດຕາມຢ່າງຊາວໂລກ ຕາມເນື້ອໜັງ ແລະມານຊາຕານ ແລະໂດຍພະຄຸນຂອງພະເຈົ້າ ທ່ານຈະຖິ້ມຕົວເກົ່າຂອງທ່ານ

GCI

ພ້ອມທັງການປະພຶດເດີມເສັຽ ແລະທ່ານຍອມທີ່ຈະຕຶງລາຄະຕັນຫາ ແລະຄວາມປາດຖະໜາຕາມຢ່າງໂລກໄວ້ເທິງໄມ້ກາງແຂນ ແລະຝັງໄວ້ ຊຶ່ງເປັນຄວາມໝາຍຂອງພິທີບັບຕິດສະມານີ້ ທ່ານສັນຍາເຊັ່ນນີ້ຫລືບໍ່?

ຜູ້ເຊື່ອໃໝ່ "ຂ້າພະເຈົ້າສັນຍາ"

ສິດຍາພິບານຫລືຜູ້ນຳ "ທ່ານເຊື່ອຫລືບໍ່ວ່າອົງພະເຢຊູຄຣິດ ພະບຸດຂອງພະເຈົ້າໄດ້ຊຳລະຄ່າໄຖ່ຄວາມບາບເພື່ອທ່ານແລ້ວ ເທິງໄມ້ກາງແຂນ ແລະທ່ານຍອມຮັບເອົາພະອົງເປັນພະຜູ້ເປັນເຈົ້າ"

ຜູ້ເຊື່ອໃໝ່ "ຂ້າພະເຈົ້າສັນຍາ"

ສິດຍາພິບານ ຫລືຜູ້ນຳ" ໂດຍພະຄຸນຂອງພະເຈົ້າ ທ່ານສັນຍາຫລືບໍ່ທີ່ຈະດຳເນີນຕາມທາງຊີວິດໃໝ່ເພື່ອຖວາຍກຽດແກ່ພະນາມຂອງພະອົງ ອັນເປັນນາມທີ່ທ່ານຮັບບັບຕິດສະມາໃນມື້ນີ້?"

ຜູ້ເຊື່ອໃໝ່ "ຂ້າພະເຈົ້າສັນຍາ"

ສິດຍາພິບານຫລືຜູ້ນຳ "ຈາກການທີ່ທ່ານໄດ້ຮັບດ້ວຍປາດ ວ່າພະເຢຊູເປັນພະຜູ້ເປັນເຈົ້າ ຂ້າພະເຈົ້າຈຶ່ງຂໍໃຫ້ບັບຕິດສະມາແກ່ທ່ານ ໃນພະນາມພະບິດ ພະບຸດ ແລະພະວິນຍານບໍລິສຸດ " ອາແມນ

2. ພະເຈົ້າຊົງສະແຫວງຫາຜູ້ນະມັດສະການທີ່ແທ້ຈິງ

ກ) ໃຫ້ຄວາມສຳຄັນແກ່ການນະມັດສະການໃນຄຣິສຕະຈັກ
**ເພງສັນລະເສີນ 22:3** ພະເຈົ້າປະທັບເທິງບັນລັງແຫ່ງການສັນລະເສີນ - ໃຫ້ເວລາແກ່ການນະມັດສະການ

ຂ) ຈັດງົບປະມານໄວ້ເພື່ອລົງທຶນຊື້ເຄື່ອງດົນຕຣີທີ່ດີສຳລັບໃຊ້ນະມັດສະການ
**ເພງສັນລະເສີນ 150:3-5**

ຄ) ເປີດໃຈຕໍ່ການຊົງນຳຂອງພະວິນຍານ
**2 ໂກຣິນໂທ 3:17**.. ເສລີພາບ

GCI

ເຮົາຕ້ອງບໍ່ນຳການນະມັດສະການຕາມທາງຂອງເຮົາເອງ
ຕົວຢ່**າງ ເພັງສັນລະເສີນ** **150:4**.. ເຕັ້ນໂລດ
**ເພັງສັນລະເສີ** **140**..ເພັງບົດໃຫມ່

ຄ.  ສິດຍາພິບານກັບການຢ້ຽມຢາມ

ສິດຍາພິບານເປັນງານທີ່ປະຕູເປີດສຳລັບການຢ້ຽມຢາມ ຊຶ່ງຕ່າງຈາກງານອາຊີບອື່ນໃດ ຢ່າລໍຖ້າໃຫ້ສະມາຊິກເຊີນແລ້ວຄ່ອຍໄປຢ້ຽມຢາມເຂົາ ໂດຍການທີ່ທ່ານເປັນຜູ້ລ້ຽງ ທ່ານຈຳເປັນຕ້ອງໄປຢ້ຽມຢາມເບິ່ງວ່າ ລູກແກະສຸກສະບາຍດີຫລືບໍ່

ການຢ້ຽມຢາມຂອງສິດຍາພິບານ

ເປັນສິ່ງສຳຄັນຢ່າງຍິ່ງເພາະມັນສະທ້ອນເຖິງການມີຫົວໃຈຢ່າງສິດຍາພິບານ ການບົກພ່ອງໃນເລື່ອງນີ້ອາດນຳມາຊຶ່ງຄຳຕິສິນນິນທາໄດ້

1. ເມື່ອໄປຢ້ຽມຢາມນັ້ນ ໃຫ້ຈົດບັນທຶກລາຍລະອຽດການຢ້ຽມຢາມໄວ້ນຳ

   - ໄປຢ້ຽມເມື່ອໃດ?
   - ເວລາທີ່ໃຊ້ໃນການຢ້ຽມ
   - ຢ້ຽມຢູ່ໃສ?
   - ສະມາຊິກມີບັນຫາຫຍັງ?

2. ສ້າງວິໄນໃນຕົວເອງທີ່ຈະອອກຢ້ຽມຢາມສະເໝີ ບໍ່ວ່າຈະຍາກຫລືບໍ່

3. ລະມັດລະວັງ

4. ແລະໃຊ້ສະຕິປັນຍາເມື່ອໄດ້ຮັບການຮ້ອງຂໍໃຫ້ຢ້ຽມຢາມສະມາຊິກຊຶ່ງເປັນເພດກົງກັນຂ້າມ ໃຫ້ພາຜູ້ນຳ ຫລືພັນລະຍາໄປຢ້ຽມຢາມນຳ

4. ວາງແຜນການຢ້ຽມຢາມໄວ້ໃຫ້ເໝາະສົມ
   ວາງແຜນທີ່ຈະຢ້ຽມຢາມສະມາຊິກໃນແຕ່ລະເຂດໃຫ້ສອດຄ້ອງກັບທິດທາງຂອງການ ເດີນທາງເພື່ອປະຫຍັດເວລາ ແລະນ້ຳມັນ (ຖ້າໃຊ້ລົດໃນການເດີນທາງ)

GCI



5. ຢ້ຽມຢາມຄົນປ່ວຍເປັນພິເສດ

ບໍ່ວ່າຜູ້ປ່ວຍຈະຢູ່ບ້ານຫລືໂຮງໝໍ ສິດຍາພິບານຕ້ອງສະແດງຄວາມຫວ່ງໃຍໂດຍການໄປຢ້ຽມຢາມເຂົາພະຍາຍາມໃຫ້ຄຳໜູນໃຈ ແລະສ້າງທັດສະນະຄະຕິທີ່ດີເມື່ອຢ້ຽມຢາມ.

6. ຢ່າລືມຄົນທີ່ຢູ່ໃນບ້ານພັກຄົນແກ່ນຳ ບາງຄັ້ງຜູ້ອາວຸໂສເຫລົ່ານີ້ຈະຮູ້ສຶກເຫງົາເປັນຢ່າງຍິ່ງ

ຖ້າບໍ່ມີເພື່ອນຫລືຍາດພີ່ນ້ອງໄປຢ້ຽມຢາມ ສິດຍາພິບານບາງຄົນຈະພາທີມງານໄປນຳເພື່ອປະກອບພິທີມະຫາສະນິດໃຫ້ເຂົາ ເພາະຄົນເຖົ້າບາງຄົນບໍ່ສາມາດໄປຮ່ວມປະຊຸມຢູ່ຄຣິສຕະຈັກໄດ້ເນື່ອງຈາກຄວາມເຈັບປ່ວຍ

ງ. ສິດຍາພິບານກັບການໃຫ້ຄຳປຶກສາ
**2ໂກຣິນໂທ 1:3-4**

ສະມາຊິກຄຣິສຕະຈັກປຽບເໝືອນລູກແກະ ພວກເຂົາຕ້ອງການການນຳທາງ

ຫລັກສູດເລື່ອງການໃຫ້ຄຳປຶກສານັ້ນຢູ່ໃນຄູ່ມືລະດັບ 3 ແຕ່ມີບາງສິ່ງຊຶ່ງເຮົາຄວນຈື່ໄວ້ດັ່ງຕໍ່ໄປນີ້:

1. ໃນການໃຫ້ຄຳປຶກສານັ້ນ ເຮົາຕ້ອງຍຶດຕາມຫລັກຂອງພະຄຳພີ **2ຕີໂມທຽວ 3:16**

2. ໃນການໃຫ້ຄຳປຶກສາ ເຮົາຕ້ອງເປັນຄົນທີ່ໄວ້ວາງໃຈໄດ້ ຢ່າເອົາເລື່ອງຂອງເຂົາໄປນິນທາ **ສຸພາສິດ 11:13**

3. ລະມັດລະວັງໃນການໃຫ້ຄຳປຶກສາແກ່ເພດກົງກັນຂ້າມ
"ສະນັ້ນຢ່າໃຫ້ສິ່ງທີ່ດີສຳລັບທ່ານ ເປັນຂໍ້ຕຳນິຕິຕຽນຂອງຜູ້ອື່ນໄດ້ເລີຍ" **ໂລມ 14:16**

ຈະເປັນການດີຖ້າໃຫ້ຄົນອື່ນຢູ່ນຳໃນຂະນະທີ່ໃຫ້ຄຳປຶກສາແກ່ເພດກົງກັນຂ້າມ ແລະຄວນນັ່ງຢູ່ໃນບ່ອນເປີດເຜີຍ ເປີດປະຕູ ແລະໜ້າຕ່າງໄວ້

4. ລັກສະນະບາງຢ່າງຂອງການເປັນຜູ້ຟັງທີ່ດີ

ກ) ເບິ່ງໜ້າຜູ້ເວົ້າ
ຂ) ຕັ້ງຄຳຖາມເພື່ອຄວາມຊັດເຈນໃນສິ່ງທີ່ໄດ້ຍິນ

GCI

ຄ)  ສະແດງຄວາມຫວ່ງໃຍ ຖາມວ່າຮູ້ສຶກຢ່າງໃດແດ່ໃນສະຖານະການນັ້ນ
ງ)  ເວົ້າຊ້ຳໃນບາງສິ່ງທີ່ໄດ້ຍິນ
ຈ)  ບໍ່ຟ້າວເວົ້າ
ສ)  ຮູ້ຈັກຄວບຄຸມອາລົມ
ຊ)  ຕອບສະໜອງໂດຍການງຶກຫົວ ຫລືຍິ້ມ
ຍ)  ຕັ້ງໃຈຟັງຢ່າງດີ
ດ)  ບໍ່ຂັດຈັງຫວະຜູ້ເວົ້າ
ຕ)  ສົນທະນາຕໍ່ໃນເລື່ອງດຽວກັນ ຈົນກວ່າຜູ້ເວົ້າຈະເວົ້າຈົບ

ຈ.  ສິດຍາພິບານກັບການຕຽມງານແຕ່ງງານ

1. ຈັດການອົບຮົມກ່ອນການແຕ່ງງານ - ສອນໃນເລື່ອງຄວາມສຳພັນລະຫວ່າງສາມີແລະພັນລະຍາ **ເອເຟໂຊ 5:22-31**
2. ໃຫ້ຄຳແນະນຳໃນເລື່ອງການເງິນ
3. ຊ່ວຍວາງແຜນການຈັດງານແຕ່ງງານ

ສ.  ສິດຍາພິບານກັບງານສົບ

**ໂຢຮັນ** 11  - ພະເຢຊູກັບການຕາຍຂອງລາຊາໂລ

1. ເມື່ອມີການຕາຍເກີດຂຶ້ນ ໄປຢ້ຽມໃນທັນທີທີ່ໄປໄດ້
2. ຊ່ວຍໃນການຕຽມການເລື່ອງງານສົບ
3. ຢ່າລືມຕິດຕາມຜົນພາຍຫລັງງານສົບ

ຊ.  ສິດຍາພິບານກັບພິທີມອບຖວາຍ

1. ຖວາຍເດັກ  **1ຊາມູເອນ 1:22**

ຂໍ້ພະຄຳພີທີ່ດີທີ່ຄວນອ່ານຄື **ມາລະໂກ 10:13-16** ຫລື **ມັດທາຍ 19:13-15**
ຄວນແນະນຳສັ່ງສອນພໍ່ແມ່ໃຫ້ຮູ້ວ່າການລ້ຽງລູກໃຫ້ເຕີບໃຫຍ່ຂຶ້ນໃນທາງຂອງພະຜູ້ເປັນເຈົ້ານັ້ນເປັນຄວາມຮັບຜິດຊອບທີ່ສຳຄັນໃຫຍ່ຫລວງ  ຕົວຢ່າງຂອງການປະກອບພິທີຖວາຍເດັກ:

GCI



ສິດຍາພິບານຫລືຜູ້ນຳ : "ທ່ານສັນຍາຫລືບໍ່ທີ່ຈະລ້ຽງລູກໃນທາງຂອງພະຜູ້ເປັນເຈົ້າ ແລະຫາໂອກາດທີ່ຈະນຳລູກໃຫ້ຮັບເອົາພະເຢຊູເປັນພະຜູ້ເປັນເຈົ້າໃນຊີວິດຂອງເຂົາ? ທ່ານສັນຍາຫລືບໍ່ທີ່ຈະປະພຶດຕົວເປັນແບບຢ່າງໃຫ້ລູກໄດ້ປະພຶດຕາມ?"

ບິດາມານດາ "ເຮົາຂໍສັນຍາ"

ສິດຍາພິບານຫລືຜູ້ນຳ "ໃນພະນາມຂອງພະເຢຊູເຈົ້າ ຂ້າພະເຈົ້າຂໍມອບຖວາຍເດັກຄົນນີ້ (ຊື່..) ແກ່ພະເຈົ້າ ອາແມນ

2. ການມອບຖວາຍອາຄານ ຫລືບ້ານໃໝ່ **2 ພົງສາວະດານ 6**

ຍ. ສິດຍາພິບານກັບການບໍລິຫານ

ເປັນການດີຢ່າງຍິ່ງທີ່ສິດຍາພິບານຈະຫາຜູ້ທີ່ມີຄວາມຊຳນານໃນການບໍລິຫານຈັກຄົນນຶ່ງມາຊ່ວຍງານ ໂປໂລຂຽນຈົດໝາຍຝາກກ່າວເຖິງຜູ້ເຊື່ອບາງຄົນຊຶ່ງມີຂອງປະທານໃນການບໍລິຫານຈັດການ **1ໂກຣິນໂທ 12:28**

ບາງຄັ້ງໃນຄຣິສຕະຈັກກໍບໍ່ຄ່ອຍມີຄົນທີ່ມີຄວາມສາມາດຢ່າງນັ້ນ ເຮັດໃຫ້ສິດຍາພິບານຕ້ອງເຮັດໜ້າທີ່ດັ່ງກ່າວດ້ວຍຕົນເອງ ຕໍ່ໄປນີ້ເປັນຂໍ້ແນະນຳບາງປະການກ່ຽວກັບການບໍລິຫານ

1. ເອົາໃຈໃສ່ໃນການອ່ານ ແລະໂຕ້ຕອບຈົດໝາຍຕ່າງໆ
2. ບາງຄຣິສຕະຈັກມີບັນຊີລາຍຊື່ຂອງສະມາຊິກ ສິດຍາພິບານຕ້ອງປັບປຸງບັນຊີລາຍຊື່ໃຫ້ທັນເຫດການຢູ່ສະເໝີ

3. ຈັດການໃຫ້ຊັບສິນຂອງຄຣິສຕະຈັກຢູ່ໃນຊື່ຂອງຄຣິສຕະຈັກ ຫລືມູນນິທິທີ່ເໝາະສົມ ບໍ່ຄວນປ່ອຍໃຫ້ຢູ່ໃນຊື່ຂອງສິດຍາພິບານ ຫລືບຸກຄົນນຶ່ງບຸກຄົນໃດເປັນສ່ວນຕົວ

4. ຈັດການລະບົບບັນຊີການເງິນໃຫ້ເປັນລະບຽບຮຽບຮ້ອຍ ເປັນການດີຍິ່ງຖ້າມີນາຍຄັງທີ່ໄວ້ໃຈໄດ້ ແລະຄວນມີການກວດສອບບັນຊີເປັນປະຈຳໂດຍນັກບັນຊີທີ່ບໍ່ມີສ່ວນໄດ້ເສັຽກັບຄຣິສຕະຈັກ ໃນ 2ໂກຣິນໂທ 8:20-21 ໂປໂລບອກໃຫ້ເຮົາລະມັດລະວັງເປັນພິເສດໃນການເບິ່ງແຍງຊັບສິນເງິນທອງ

5. ຄວນມີການແຕ່ງຕັ້ງເລຂານຸການເພື່ອຈົດບັນທຶກການປະຊຸມແຕ່ລະຄັ້ງໃຫ້ຮຽບຮ້ອຍ

GCI

6. ຈັດການດູແລສະຖານທີ່ຂອງຄຣິສຕະຈັກໃຫ້ຮຽບຮ້ອຍ ຈັດການຊ່ອມແຊມສ່ວນທີ່ເສັຽ ຮັກສາຄວາມສະອາດໃນບໍລິເວນຄຣິສຕະຈັກ ໂດຍສະເພາະສ່ວນທີ່ເປັນຫ້ອງນ້ຳ ເຖິງແມ່ນພະເຈົ້າຈະພິຈາລະນາທີ່ຈິດໃຈ ແຕ່"ມະນຸດພິຈາລະນາເບິ່ງທີ່ຮູບກາຍພາຍນອກ"

ດ. ສິດຍາພິບານກັບການເບິ່ງແຍງຜູ້ນຳຄຣິສຕະຈັກ

ເມື່ອຄຣິສຕະຈັກເຕີບໃຫຍ່ຂຶ້ນ ຈຳນວນທີມງານແລະຜູ້ນຳກໍຈະຂະຫຍາຍໄປນຳ ສິດຍາພິບານຈຳເປັນຕ້ອງເບິ່ງແຍງຄວາມເປັນຢູ່ຂອງພວກເຂົາ ເພື່ອໃຫ້ເກີດປະສິດທິພາບໃນການເຮັດວຽກ ລາຍລະອຽດຕ່າງໆໄດ້ກ່າວໄວ້ແລ້ວໃນຫລັກສູດອົບຮົມຜູ້ນຳ ໃນບ່ອນນີ້ຈະກ່າວເຖິງຈຸດທີ່ສຳຄັນໆໄວ້ພໍສັງເຂບ

1. ຝຶກອົບຮົມ ໃຫ້ມີຄວາມພ້ອມສຳລັບພັນທະກິດ
ຜູ້ນຳໃນຄຣິສຕະຈັກອາດຮູ້ສຶກທໍ້ໃຈຖ້າທ່ານມອບໝາຍໃຫ້ເຂົາເຮັດ ໂດຍທີ່ບໍ່ໄດ້ຝຶກເຂົາເສັຽກ່ອນ

2. ຈັດກິດຈະກຳພິເສດເພື່ອສະແດງໃຫ້ເຫັນວ່າທ່ານປະທັບໃຈໃນການຮັບໃຊ້ຂອງພວກເຂົາ ເຮັດໃຫ້ເຂົາເຫັນວ່າເຂົາມີສ່ວນໃນຄວາມສຳເລັດຂອງຄຣິສຕະຈັກ

3. ສຳລັບຄົນງານທີ່ເຮັດໜ້າທີ່ດ້ວຍຄວາມຊື່ສັດ ຄວນສົ່ງເຂົາໄປອົບຮົມ ແລະພັດທະນາທັກສະຂອງເຂົາຢູ່ສະເໝີ ສິດຍາພິບານບາງຄົນສົ່ງຜູ້ນຳໄປອົບຮົມໃນຫລັກສູດພິເສດ ຫລືສົ່ງໄປຮ່ວມການສຳມະນາຜູ້ນຳຕ່າງໆ